CARE International in Lao PDR, Nongsangthor Road, Ban Nongsangthor, Saysettha District, Vientiane Capital Lao PDR, P.O Box: 4328, Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

ວັນທີ: 17 ພະຈິກ 2026

ປະກາດເຊີນຍື່ນຊອງປະມູນ ເພື່ອເຮັດສັນຍາໄລຍະຍາວ (Framework Agreement) ສຳລັບ ການສະໜອງ ແລະ ຈັດສົ່ງ ວັດສະດຸກໍ່ສ້າງລະບົບນ້ຳສະອາດ

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ (CARE Laos) ກຳລັງໃຫ້ການຊ່ວຍເຫລືອຊຸມຊົນໃນເຂດຊົນນະບົດ ຢູ່ ບັນດາແຂວງພາກເໜືອຂອງ ສປປ ລາວ ເພື່ອປັບປຸງການເຂົ້າເຖິງນ້ຳສະອາດ ຜ່ານໂຄງການກໍ່ສ້າງລະບົບນ້ຳໃຫ້ແກ່ຊຸມ ຊົນ. ອີງຕາມນະໂຍບາຍການຈັດຊື້-ຈັດຈ້າງຂອງອົງການແຄຣ໌ ນານາຊາດ, ພວກເຮົາມີຈຸດປະສົງເຮັດສັນຍາຈັດຊື້ໄລຍະ ຍາວ (Framework Agreement) ຮ່ວມກັບຜູ້ສະໜອງທີ່ມີຄຸນສົມບັດຄົບຖ້ວນ.

ດັ່ງນັ້ນ, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຈຶ່ງຂໍເຊີນບັນດາບໍລິສັດ, ນິຕິບຸກຄົນ ແລະ ຮ້ານຄ້າວັດສະດຸກໍ່ສ້າງ/ ອຸປະກອນກໍ່ສ້າງ ທີ່ໄດ້ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ຮ່ວມຍື່ນຊອງປະມູນແບບປິດລັບ ຫຼື ຍື່ນ ຜ່ານທາງອີເມວ, ພ້ອມທັງໃບປະເມີນລາຄາ ຕາມໃບລາຍລະອຽດເຄື່ອງ (Bill of Quantities - BoQ) ທີ່ລະບຸໄວ້ ໃຫ້ຄົບຖ້ວນ. ສຳລັບການຍື່ນປະມູນ ຕ້ອງປະກອບເອກະສານດັ່ງນີ້:

ເອກະສານ ແລະ ເງື່ອນໄຂທີ່ຈຳເປັນຕ້ອງປະກອບ:

- **ໃບປະເມີນລາຄາ (Priced Bill of Quantities - BoQ):** ຕ້ອງຕື່ມຂໍ້ມູນໃສ່ແບບຟອມ BoQ ຂອງອົງການ ແຄຣ໌ ໃຫ້ຄົບຖ້ວນ, ໂດຍສະແດງລາຄາຕໍ່ໜ່ວຍ ແລະ ລາຄາລວມສຳລັບທຸກລາຍການ, ພ້ອມທັງເຊັນ ແລະ ປະ ທັບຕາ. ສຳລັບແຕ່ລະລາຍການ, ຕ້ອງລະບຸຈຳນວນທີ່ສາມາດສະໜອງໄດ້ສູງສຸດ, ພ້ອມລະບຸລາຄາທີ່ສາມາດ ຫລຸດໄດ້ ຖ້າຫາກມີການສັ່ງຊື້ຈຳນວນຫລາຍ (ຕົວຢ່າງ: ການກຳນົດຂັ້ນລາຄາຕາມປະລິມານ). ເນື່ອງຈາກ ຈຳນວນທີ່ລະບຸໃນໃບລາຍການເຄື່ອງເປັນພຽງຕົວເລກຄາດຄະເນເທົ່ານັ້ນ ແລະ ການສັ່ງຊື້ຕົວຈິງອາດມີການ ປ່ຽນແປງ. ຊອງປະມູນທີ່ບໍ່ມີໃບລາຍການເຄື່ອງ BoQ ທີ່ຕື່ມຂໍ້ມູນຄົບຖ້ວນ ຈະບໍ່ໄດ້ຮັບການພິຈາລະນາ.
- **ປະຫວັດຫຍໍ້ຂອງຜູ້ສະໜອງ (Supplier Profile):** ປະຫວັດຄວາມເປັນມາຂອງບໍລິສັດ, ທີ່ຢູ່ຕົວຈິງ ແລະ ຂໍ້ ມູນຕິດຕໍ່ຢ່າງຊັດເຈນ.
- **ເອກະສານທາງກົດໝາຍ ແລະ ອາກອນ (Legal & Tax Compliance):** ສຳເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ ທີ່ຍັງໃຊ້ການໄດ້.
- **ແບບສອບຖາມຜູ້ສະໜອງ (Vendor Questionnaire):** ແບບສອບຖາມຜູ້ສະໜອງຂອງອົງການແຄຣ໌ ທີ່ ຕື່ມຂໍ້ມູນຄົບຖ້ວນ ແລະ ເຊັນຢັ້ງຢືນ (ສາມາດຂໍຮັບແບບຟອມໄດ້ຈາກອົງການແຄຣ໌).
- **ຂໍ້ມູນສະເພາະດ້ານເຕັກນິກ (Technical Specifications):** ແຄັດຕາລັອກສິນຄ້າ (Catalog) ຫຼື ຮູບ ພາບ ທີ່ລະບຸລາຍລະອຽດສະເພາະຂອງສິນຄ້າ ແລະ ປະເທດຜູ້ຜະລິດ. (ແບບຟອມ BoQ ແມ່ນສາມາດສະເໜີ ຂໍເອົາແບບຟອມຈາກອົງການແຄຣ໌ໄດ້).

- **ເງື່ອນໄຂທາງການຄ້າ (Commercial Terms):** ລະບຸເງື່ອນໄຂການຊຳລະເງິນຢ່າງຊັດເຈນ (ຈະພິຈາລະນາເປັນພິເສດ ຖ້າຫາກຜູ້ສະໜອງສາມາດໃຫ້ກຳນົດໄລຍະເວລາການຈ່າຍເງິນ/Credit terms) ແລະ ເງື່ອນໄຂການຈັດສົ່ງ, ລວມທັງໄລຍະເວລາໃນການຈັດສົ່ງ (Lead time) ແລະ ສະຖານທີ່ຈັດສົ່ງ.
- **ການຂົນສົ່ງ ແລະ ການຈັດສົ່ງ (Logistics & Delivery):** ລາຄາຕໍ່ໜ່ວຍທັງໝົດໃນ BoQ ຕ້ອງລວມເອົາຄ່າຂົນສົ່ງ ແລະ ຄ່າຈັດສົ່ງໄປຮອດບ້ານເປົ້າໝາຍທີ່ກຳນົດໄວ້ແລ້ວ. ຜູ້ເຂົ້າຮ່ວມປະມູນຍັງຕ້ອງຍື່ນແຜນການຈັດສົ່ງທີ່ສະເໜີ ໂດຍກວມເອົາທຸກແຂວງຂອງ ສປປ ລາວ, ເຊິ່ງສະແດງໃຫ້ເຫັນລາຍລະອຽດຂອງແຕ່ລະແຂວງດັ່ງນີ້:
    - (ກ) ຄ່າຂົນສົ່ງທີ່ລວມຢູ່ໃນລາຄາຕໍ່ໜ່ວຍ, ພ້ອມດ້ວຍພື້ນຖານການຄິດໄລ່ (ຕົວຢ່າງ: ຄ່າຂົນສົ່ງຕໍ່ຖ້ຽວ, ຕໍ່ໂຕນ, ຫຼື ຕໍ່ກິໂລແມັດ, ແລະ ໄລຍະທາງຈາກສາງຂອງຜູ້ປະມູນ);
    - (ຂ) ໄລຍະເວລາໃນການຈັດສົ່ງ (Delivery lead time); ແລະ
    - (ຄ) ວິທີການຂົນສົ່ງ ແລະ ຂໍ້ຈຳກັດການເຂົ້າເຖິງພື້ນທີ່ (ຕົວຢ່າງ: ໃນລະດູຝົນ). ອົງການແຄຣ໌ ຈະບໍ່ຮັບຜິດຊອບຈ່າຍຄ່າຂົນສົ່ງໃດໆເພີ່ມເຕີມ ນອກເໜືອໄປຈາກທີ່ໄດ້ລະບຸໄວ້ໃນໃບສະເໜີລາຄາ.
- **ສະກຸນເງິນ ແລະ ກຳນົດເວລາຂອງໃບສະເໜີລາຄາ (Currency & Validity):** ໃບສະເໜີລາຄາທັງໝົດຕ້ອງສະເໜີເປັນສະກຸນເງິນ **ກີບ (LAK)** ເທົ່ານັ້ນ ແລະ ຕ້ອງລະບຸກຳນົດເວລາທີ່ໃບສະເໜີລາຄາສາມາດນຳໃຊ້ໄດ້ຢ່າງຊັດເຈນ ພ້ອມທັງລະບຸວ່າລາຄາດັ່ງກ່າວໄດ້ລວມອາກອນມູນຄ່າເພີ່ມ (VAT) ແລ້ວ ຫຼື ຍັງ.
- **ການຮັບປະກັນ (Warranty):** ລະບຸເງື່ອນໄຂການຮັບປະກັນຢ່າງຊັດເຈນສຳລັບວັດສະດຸກໍ່ສ້າງທາງໝົດ.

ການສອບຖາມຂໍ້ມູນ ແລະ ການຂໍຮັບແບບຟອມ BoQ (Inquiries & BoQ Requests): ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບລາຍລະອຽດສະເພາະຂອງວັດສະດຸ, ໃບປະເມີນລາຄາ (BoQ), ຫຼື ສະຖານທີ່ຈັດສົ່ງ, ກະລຸນາຕິດຕໍ່:

- **ອີເມວ:** phetphouthone.soulinethavong@care.org
- **WhatsApp / ໂທລະສັບ:** 020 55751333

ຄຳແນະນຳໃນການຍື່ນຊອງປະມູນ (Submission Instructions): ເອກະສານການປະມູນ ແລະ ເອກະສານປະກອບທັງໝົດ ຕ້ອງສົ່ງໃຫ້ຮອດບໍ່ໃຫ້ກາຍ **ວັນທີ 23 ພະຈິກ 2026 ເວລາ 16:00 ໂມງ** ຜ່ານຊ່ອງທາງໃດໜຶ່ງດັ່ງລຸ່ມນີ້:

- **ຍື່ນເປັນເອກະສານປິດລັບ (Sealed Hardcopy):** ສົ່ງໂດຍກົງທີ່ຫ້ອງການ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ, ຖະໜົນໜອງສ້າງທໍ່, ບ້ານໜອງສ້າງທໍ່, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທລະສັບ: (+856-21) 217 727

- **ຍື່ນຜ່ານທາງອີເມວ (Electronic Bid):** ສົ່ງໄປທີ່ອີເມວ Lao.contracts@care.org ໂດຍໃສ່ຫົວຂໍ້ອີເມວວ່າ: "IFB – Water Supply Construction Materials – [ຊື່ບໍລິສັດ]"

ຊອງປະມູນທັງໝົດຕ້ອງຈ່າໜ້າຊອງເຖິງ: ຄະນະກຳມະການຈັດຊື້-ຈັດຈ້າງ ອົງການແຄຣ໌ (CARE Tender Committee) **ຫົວຂໍ້:** ວັດສະດຸກໍ່ສ້າງລະບົບນ້ຳປະປາ (Water Supply Materials)

ໝາຍເຫດ: ເອກະສານການປະມູນທີ່ຍື່ນມາແລ້ວຈະບໍ່ມີການສົ່ງຄືນ. ອົງການແຄຣ໌ ຂໍສະຫງວນສິດໃນການຮັບເອົາ ຫຼື ປະຕິເສດຊອງປະມູນໃດໜຶ່ງ, ບໍ່ວ່າຈະເປັນທັງໝົດ ຫຼື ບາງສ່ວນ, ແລະ ຈະຕິດຕໍ່ສະເພາະຜູ້ສະໜອງທີ່ຜ່ານການຄັດເລືອກຮອບທຳອິດເທົ່ານັ້ນ.